ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

ເລກທີ: 1206 /ກສປ

ນະຄອນຫຼວງວຽງຈັນ,ວັນທີ: 25 SEP 2026

ແຈ້ງການ

ຮຽນ: ທ່ານຫົວໜ້າ ຫ້ອງການ, ກົມ, ກອງ, ສູນ, ສະຖາບັນ ພາຍໃນ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ.

ເລື່ອງ: ແຈ້ງການປິດຮັບບົດສະເໜີໂຄງການຍ່ອຍ ທີ່ຂໍນຳໃຊ້ງົບປະມານຈາກ ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະຈຳປີ 2026.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສະບັບເລກທີ 1259/ກສ ລົງວັນທີ 12 ກັນຍາ 2026;
- ອີງຕາມ ໜັງສືແຈ້ງການແນະນຳ ກ່ຽວກັບ ຂັ້ນຕອນການຍື່ນບົດສະເໜີ ໂຄງການ ແລະ ເປີດຮັບບົດສະເໜີໂຄງການ ທຶນພາຍໃນ ປີ 2026 ສະບັບເລກທີ 478/ກສປ, ລົງວັນທີ 23 ເມສາ 2026.

ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທຸກພາກ ສ່ວນຊາບ ວ່າ: ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໄດ້ເປີດຮັບ ບົດສະເໜີໂຄງການຍ່ອຍຕາມ 6 ນະໂຍບາຍສະໜອງທຶນນັບແຕ່ ວັນທີ 01 ມັງກອນ ເຖິງ ເດືອນ ກັນຍາ 2026 ລວມໄລຍະເວລາ 9 ເດືອນ ເພື່ອໃຫ້ພາກສ່ວນຕ່າງໆສົ່ງບົດສະເໜີໂຄງການຍ່ອຍ ສະໝັກຂໍທຶນຕາມລະບຽບການ ສະນັ້ນ, ເພື່ອປະຕິບັດຕາມນະໂຍບາຍສະໜອງທຶນ ແລະ ລະບຽບການສະເໜີຂໍອະນຸມັດງົບປະມານພ້ອມທັງເປັນການກະກຽມ ເອົາບົດສະ ເໜີໂຄງການຍ່ອຍເຂົ້າຜ່ານ ກອງປະຊຸມສະພາບໍລິຫານກອງທຶນ ໃຫ້ທ່ວງທັນຕາມກຳນົດເວລາຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້, ຈຶ່ງແຈ້ງການປິດຮັບບົດສະເໜີໂຄງການຍ່ອຍ ນັບແຕ່ ວັນທີ 25 ກັນຍາ 2026 ເປັນຕົ້ນໄປ ແລະ ແຈ້ງໃຫ້ທຸກພາກສ່ວນຮັບຊາບ.

ດັ່ງນັ້ນ, ຈຶ່ງຮ່າງແຈ້ງການມາຍັງທ່ານ ເພື່ອຊາບ ຕາມທາງຄວນດ້ວຍ./.

ຫົວໜ້າຫ້ອງການກອງທຶນ

ພັດນະຄອນ ຄັນທະນີໄຊ